ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຝຶກອົບຮົມວຽກງານບັນຊີ ແລະ ການເງິນ ຂອງ ທຫລ ປະຈໍາປີ 2024



ໃນລະຫວ່າງວັນທີ 16-18 ກໍລະກົດ 2024 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຝຶກອົບຮົມວຽກງານບັນຊີແລະການເງິນຂອງ ທຫລ ປະຈໍາປີ 2024 ຂຶ້ນ ທີ່ຫ້ອງປະຊຸມ ສະຖາບັນການທະນາຄານ ໂດຍການເປັນປະທານຂອງ ທ່ານ ນ. ນະຄອນສີ ມະໂນທັມ ຫົວໜ້າກົມບັນຊີແລະການເງິນ, ມີບັນດາ ຄະນະກົມ, ຄະນະພະແນກ, ສາຂາ ທຫລ ປະຈໍາພາກ ແລະ ວິຊາການພາຍໃນ ທຫລ ເຂົ້າຮ່ວມ.

ຈຸດປະສົງຂອງການຈັດຝຶກອົບຮົມໃນຄັ້ງນີ້, ແມ່ນເພື່ອເປັນການພັດທະນາ ແລະ ສ້າງຂີດຄວາມສາມາດດ້ານວຽກງານບັນຊີແລະການເງິນ ໃຫ້ແກ່ພະນັກງານ ທຫລ ໄດ້ຮັບຮູ້, ເຂົ້າໃຈເລິກເຊິ່ງຕໍ່ກັບການຈັດຕັ້ງປະຕິບັດວຽກງານບັນຊີແລະການເງິນ ແລະ ສາມາດນໍາເອົາບົດຮຽນໄປສ້າງ, ປັບປຸງ, ພັດທະນາ ແລະ ນໍາໄປໝູນໃຊ້ເຂົ້າໃນວຽກງານຕົວຈິງໃຫ້ມີປະສິດທິຜົນດີຂຶ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານບັນຊີແລະການເງິນ ມີຄວາມຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ, ມີຄວາມເຂັ້ມແຂງ, ທັນສະໄໝ ແລະ ສາມາດກວດສອບໄດ້.





ການຈັດຝຶກອົບຮົມດັ່ງກ່າວເຊິ່ງປະກອບເນື້ອໃນທີ່ສຳຄັນ ໄດ້ແກ່: ແຈ້ງການ ການປະຕິບັດເຄື່ອງໝາຍຕົວເລກຈຳນວນເງິນ ແລະ ຈຳນວນເສດສ່ວນ, ແນະນຳການດັດແກ້ບັນຊີທີ່ຜິດພາດ, ແນະນຳການນຳໃຊ້ລະບົບໂປຣແກຣມບັນຊີ ທຫລ, ລະບຽບການນຳໃຊ້ User ໃນລະບົບ, ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານບັນຊີ ຕາມຂໍ້ຕົກລົງວ່າດ້ວຍການບັນຊີ ທຫລ, ວິທີການກວດກາບັນຊີ ທຫລ, ໂຄງສ້າງຕາຕະລາງງົບປະມານ (ສະບັບປັບປຸງໃໝ່) ແລະ ຂັ້ນຕອນການຂຶ້ນແຜນ, ຕິດຕາມການຈັດຕັ້ງປະຕິບັດ, ວຽກງານການກວດກາງົບປະມານການເງິນ, ການສະຫຼຸບງົບປະມານ ແລະ ປຶກສາຫາລືກ່ຽວກັບການແກ້ໄຂວຽກງານການເງິນຕາມບົດບັນທຶກກອງປະຊຸມປີ ຜ່ານມາ, ຂໍ້ຄົງຄ້າງດ້ານວຽກງານການເງິນ ຂອງ ທຫລ ແລະ ຂໍ້ຄົງຄ້າງຈາກຜົນການກວດກາບັນຊີ ແລະ ກວດນັບຊັບສົມບັດ ປີ 2023.

ການຝຶກອົບແມ່ນໄດ້ດຳເນີນເປັນເວລາ 03 ວັນເຕັມ, ດ້ວຍບັນຍາກາດອັນຟົດຟື້ນ ແລະ ມີເນື້ອໃນ ເຮັດໃຫ້ການຝຶກອົບຮົມໄດ້ປິດລົງດ້ວຍຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

**ຂ່າວ: ກົມບັນຊີແລະການເງິນ**

**ພາບ: ສົມພົດ ທຳມະວົງ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*